สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---000---

ທະນາຄານແຫ່ງ ສປປ ລາວ

ກົມບັນຊີ-ການເງິນ

ເລກທີ: 242 /ກບຊ

ນະຄອນຫຼວງວຽງຈັນ, ວັນທີ: 20 MAY 2016

## ບົດແນະນຳ
## ສຳລັບທະນາຄານທຸລະກິດ
## ກ່ຽວກັບເງິນກູ້ປ່ອຍຮ່ວມ (Syndicated loan)

- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງແຜນຜັງການບັນຊີ ແລະ ແບບຟອມໃບລາຍງານການເງິນສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບ ທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 672/ທຫລ, ລົງວັນທີ 02/09/2008.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ, ລົງວັນທີ່ 19/04/2011.
- ອີງຕາມຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ສະບັບເລກທີ 330/ທຫລ ລົງວັນທີ 02/07/2007.

ກົມບັນຊີ-ການເງິນ, ທະນາຄານແຫ່ງ ສປປ ລາວ ອອກບົດແນະນຳວຽກງານການບັນຊີກ່ຽວກັບເງິນກູ້ປ່ອຍຮ່ວມຂອງທະນາຄານທຸລະກິດ ດັ່ງນີ້:

**1. ຈຸດປະສົງ.**

ບົດແນະນຳສະບັບນີ້ມີຈຸດປະສົງເພື່ອເຮັດໃຫ້ການບັນທຶກບັນຊີກ່ຽວກັບເງິນກູ້ປ່ອຍຮ່ວມ ລະຫ່ວາງທະນາຄານຫົວໜ້າກຸ່ມ ແລະ ທະນາຄານສະມາຊິກ ມີຄວາມຖືກຕ້ອງ, ເປັນເອກະພາບກັນໃນກຸ່ມ ແລະ ເພື່ອໃຫ້ສອດຄ່ອງຕາມລະບຽບການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນ ຂອງທະນາຄານທຸລະກິດ.

**2. ຄວາມໝາຍຂອງເງິນກູ້ປ່ອຍຮ່ວມ.**

ເງິນກູ້ປ່ອຍຮ່ວມ (Syndicated loan) ແມ່ນເງິນກູ້ທີ່ກຸ່ມທະນາຄານທຸລະກິດ ນັບແຕ່ສອງທະນາຄານຂຶ້ນໄປປ່ອຍກູ້ຮ່ວມກັນ. ການປ່ອຍກູ້ໃນຮູບແບບນີ້ຕ້ອງມີທະນາຄານໜຶ່ງເປັນຫົວໜ້າກຸ່ມ ຮັບຜິດຊອບວິເຄາະຖານະເງິນກູ້ຂອງລູກຄ້າ, ສ້າງສັນຍາເງິນກູ້ປ່ອຍຮ່ວມ ລະຫວ່າງທະນາຄານໃນກຸ່ມຊຶ່ງລວມມີທະນາຄານຫົວໜ້າກຸ່ມ ແລະ ທະນາຄານສະມາຊິກ ແລະ ສ້າງສັນຍາເງິນກູ້ກັບລູກຄ້າ. ໂດຍທົ່ວໄປ ຜົນຕອບແທນໃນການປ່ອຍກູ້ ຈະຖືກແບ່ງປັນຕາມສັດສ່ວນຂອງຈຳນວນເງິນທີ່ແຕ່ລະທະນາຄານໄດ້ປ່ອຍຮ່ວມກັນ ຫຼື ປະຕິບັດ ຢ່າງອື່ນຕາມສັນຍາທີ່ຕົກລົງກັນໄວ້.

**3. ເລກໝາຍບັນຊີທີ່ນຳໃຊ້.**

**3.1** ບັນຊີໃນໃບສະຫຼຸບຊັບສົມບັດ :

| | |
|---|---|
| 1101100 | ເງິນສົດ |
| 1131110 | ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ |
| 120XXXX | ສິນເຊື່ອປ່ອຍໃຫ້ລູກຄ້າ |
| 120X7XX | ດອກເບ້ຍຄ້າງຮັບຈາກສິນເຊື່ອປ່ອຍໃຫ້ລູກຄ້າ |
| 128XXXX | ໜີ້ຄວນເອົາໃຈໃສ່ |

| | |
|---|---|
| 128X7XX | ດອກເບ້ຍໜີ້ຄວນເອົາໃຈໃສ່ຄ້າງຮັບ |
| 1291XXX | ໜີ້ຕໍ່າກວ່າມາດຕະຖານ |
| 1292XXX | ໜີ້ສົງໃສ |
| 1293XXX | ໜີ້ສູນ |
| 12971XX | ດອກເບ້ຍຄ້າງຮັບຈາກສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ |
| 12991XX | ເງິນແຮຄ່າເສື່ອມມູນຄ່າຂອງສິນເຊື່ອປ່ອຍໃຫ້ລູກຄ້າທວງຍາກ |
| 12992XX | ເງິນແຮຄ່າເສື່ອມມູນຄ່າຂອງໜີ້ສົງໃສ |
| 12993XX | ເງິນແຮ່ຄ່າເສື່ອມມູນຄ່າຂອງໜີ້ສູນ |
| 2131110 | ເງິນຝາກກະແສລາຍວັນຂອງທະນາຄານອື່ນ |
| 2201100 | ເງິນຝາກກະແສລາຍວັນຂອງລູກຄ້າ |
| 2361888 | ເຈົ້າໜີ້ພາຍນອກອື່ນໆ |
| 2388500 | ດອກເບ້ຍທວງຍາກລໍຖ້າສະສາງ |
| 3401XXX | ເງິນແຮເພື່ອຄວາມສ່ຽງໃນການໃຫ້ກູ້ຢືມ |
| 3402XXX | ເງິນແຮ່ເພື່ອຄວາມສ່ຽງໜີ້ຄວນເອົາໃຈໃສ່ |
| 4109300 | ລາຍຮັບທີ່ໄດ້ສົ່ງຄືນ |
| 4701200 | ຫັກຄ່າເສື່ອມມູນຄ່າໜີ້ທວງຍະກຈາກລູກຄ້າ |
| 47041XX | ຫັກເງິນແຮ່ເພື່ອຄວາມສ່ຽງໃນການໃຫ້ກູ້ຢືມ |
| 47042XX | ຫັກເງິນແຮ່ເພື່ອຄວາມສ່ຽງໜີ້ຄວນເອົາໃຈໃສ່ |
| 4705100 | ໜີ້ສູນທີ່ມີການຄຸ້ມກັນໂດຍເງິນແຮ |
| 5102XXX | ລາຍຮັບຈາກການເຄື່ອນໄຫວກັບລູກຄ້າ |
| 5102900 | ລາຍຮັບດອກເບ້ຍໜີ້ທວງຍາກ |
| 5102680 | ລາຍຮັບດອກເບ້ຍອື່ນໆ |
| 5107120 | ລາຍຮັບຈາກຄໍາໝັ້ນສັນຍາປະກອບທຶນທີ່ໄດ້ໃຫ້ແກ່ລູກຄ້າ |
| 5701200 | ເກັບຄືນເງິນແຮ່ຄ່າເສື່ອມມູນຄ່າໜີ້ທວງຍາກຈາກລູກຄ້າ |
| 57041XX | ເກັບຄືນເງິນແຮ່ເພື່ອຄວາມສ່ຽງໃນການໃຫ້ກູ້ຢືມແກ່ລູກຄ້າ |
| 570421X | ເກັບຄືນເງິນແຮ່ຄວາມສ່ຽງໜີ້ຄວນເອົາໃຈໃສ່ |
| 5705000 | ເກັບຄືນໜີ້ທວງຍາກທີ່ໄດ້ຈົດເປັນການຂາດທຶນ |

**3.2** ບັນຊີນອກໃບສະຫຼຸບຊັບສົມບັດ :

| | |
|---|---|
| 9101110 | ເງິນໃຫ້ກູ້ຢືມຍັງບໍ່ທັນໄດ້ເບີກຈ່າຍ |
| 9102100 | ຄໍາໝັ້ນສັນຍາສະໜອງທຶນທີ່ໄດ້ຮັບຈາກທະນາຄານອື່ນ |
| 9810111 | ບັນຊີຄູ່ພົວພັນເງິນໃຫ້ກູ້ຢືມຍັງບໍ່ທັນໄດ້ເບີກຈ່າຍ |
| 9810210 | ບັນຊີຄູ່ພົວພັນຄໍາໝັ້ນສັນຍາປະກອບທຶນ |
| 9890100 | ຕົ້ນທຶນໜີ້ທວງຍາກທີ່ໄດ້ຈົດເປັນການຂາດທຶນ |
| 9890200 | ບັນຊີຄູ່ກົງກັບ |
| 9901000 | ຕົ້ນທຶນໜີ້ທວງຍາກທີ່ໄດ້ຈົດເປັນການຂາດທຶນ |
| 9902000 | ດອກເບ້ຍທີ່ໄດ້ຈົດເປັນຂາດທຶນ |